# ການປະເມີນການເລີ້ມຕົ້ນຊັ້ນອະນຸບານ ທີ່ດີທີ່ສຸດ

## ຄູ່ມືສຳລັບພໍ່ແມ່ແລະຜູ້ດູແລ

**ການປະເມີນການເລີ້ມຕົ້ນຊັ້ນອະນຸບານທີ່ດີ ທີ່ສຸດແມ່ນການປະເມີນທົ່ວຣັດທີ່ຊ່ວຍໃຫ້ບັນດາຄູລະບຸຄວາມສາມາດທາງດ້ານການຮູ້ໜັງສືພາສາອັງກິດ ແລະ ຕົວເລກຂອງນັກຮຽນແຕ່ລະຄົນໃນຕອນເລີ້ມຕົ້ນຂອງຊັ້ນອະນຸບານ.**




ເດັກນ້ອຍເລີ້ມເຂົ້າໂຮງຮຽນດ້ວຍທັກສະການຮູ້ໜັງສື ແລະ ຕົວເລກຕັ້ງແຕ່ຕົ້ນໆ, ຄວາມຮູ້ ແລະ ຄວາມເຂົ້າໃຈທີ່ພັດທະນາຈາກການເຊື່ອມຕໍ່ກັບໂລກ ແລະ ຄົນອ້ອມຂ້າງ. ການປະເມີນການເລີ້ມຕົ້ນຊັ້ນອະນຸບານທີ່ດີທີ່ສຸດປະກອບດ້ວຍອົງປະກອບການຮູ້ຫນັງສື ແລະ ຕົວເລກ ແລະໃຫ້ຂໍ້ມູນແກ່ຄູກ່ຽວກັບຈຸດແຂງ ແລະ ຄວາມຕ້ອງການສ່ວນບຸກຄົນຂອງນັກຮຽນ.

ການປະເມີນສະໜັບສະໜູນບັນດາຄູໃນການພັດທະນາໂຄງການການສອນແລະການຮຽນທີ່ສ້າງຈາກສິ່ງທີ່ນັກຮຽນຮູ້. ຄູຈະນັ່ງກັບນັກຮຽນແຕ່ລະຄົນ, ໂດຍສຸມໃສ່ສິ່ງທີ່ເຂົາເຈົ້າສາມາດເຮັດໄດ້. ລູກຂອງທ່ານບໍ່ຈຳເປັນຕ້ອງກຽມໂຕ ຫຼື ຮຽນສຳລັບການປະເມີນນີ້. ຍ້ອນວ່າເດັກນ້ອຍໄດ້ຮຽນຮູ້ໃນອັດຕາທີ່ແຕກຕ່າງກັນ, ບໍ່ຈຳເປັນຕ້ອງເປັນຫ່ວງຖ້າຫາກວ່າລູກຂອງທ່ານບໍ່ສາມາດຕອບຄຳຖາມໄດ້ທຸກຂໍ້.

ຫຼັງຈາກການປະເມີນບໍ່ດົນ, ຄູຈະໃຫ້ຂໍ້ມູນກ່ຽວກັບທັກສະ, ຄວາມຮູ້ແລະຄວາມເຂົ້າໃຈທີ່ລູກຂອງທ່ານສະແດງໃຫ້ເຫັນໃນລະຫວ່າງການປະເມີນ.

ການປະເມີນການເລີ້ມຕົ້ນຊັ້ນອະນຸບານທີ່ດີທີ່ສຸດແມ່ນລວມເຖິງນັກຮຽນທັງໝົດ. ຖ້າພາສາອັງກິດບໍ່ແມ່ນພາສາບ້ານຂອງທ່ານ ຫຼື ລູກຂອງທ່ານຕ້ອງການການປັບປ່ຽນ, ກະລຸນາຕິດຕໍ່ໂຮງຮຽນຂອງທ່ານເພື່ອຂໍເອົາຂໍ້ມູນເພີ້ມເຕີມກ່ຽວກັບວິທີສະໜັບສະໜູນລູກຂອງທ່ານ.

### ການປະເມີນການຮູ້ໜັງສື

ວຽກງານການຮູ້ໜັງສືຖືກອອກແບບມາເພື່ອລະບຸວ່ານັກຮຽນສາມາດຂຽນຊື່ຂອງເຂົາເຈົ້າ, ຈື່ຈຳສຽງ, ຕົວອັກສອນແລະຄຳທີ່ຄຸ້ນເຄີຍ, ແລະຈື່ຈຳລາຍລະອຽດກ່ຽວກັບໜັງສືຂະໜາດສັ້ນທີ່ໄດ້ອ່ານໃຫ້ພວກເຂົາຟັງໄດ້ຫຼືບໍ່.

ໃນລະຫວ່າງການປະເມີນການຮູ້ໜັງສື, ຄູຈະຖາມລູກຂອງທ່ານເຊັ່ນ:

- 'ຟັງຄຳເຫຼົ່ານີ້: map, tap. ເຈົ້າຄິດເຖິງຄຳສັບອື່ນທີ່ຄ້ອງຈອງໄດ້ບໍ່?'
- (ຫຼັງຈາກອ່ານປື້ມສັ້ນ) 'ເຈົ້າບອກຂ້ອຍກ່ຽວກັບເລື້ອງທີ່ຂ້ອຍຫາກໍອ່ານໃຫ້ເຈົ້າຟັງໄດ້ບໍ?'

ຄຳຖາມເຫຼົ່ານີ້ຊ່ວຍໃຫ້ຄູກຳນົດວ່າລູກຂອງທ່ານສາມາດຈື່ຄຳສັບທີ່ອອກສຽງຄືກັນ ແລະ ຈື່ຈຳຂໍ້ມູນຈາກໜັງສືສັ້ນທີ່ອ່ານໃຫ້ເຂົາເຈົ້າຟັງໄດ້ຫຼືບໍ່. ສິ່ງເຫຼົ່ານີ້ແມ່ນທັກສະການຮູ້ໜັງສືທີ່ສຳຄັນທີ່ເດັກນ້ອຍຈະພັດທະນາໃນໄລຍະປີທຳອິດຂອງເຂົາເຈົ້າຢູ່ໃນໂຮງຮຽນ.

### ການປະເມີນຕົວເລກ

ວຽກງານຕົວເລກແມ່ນກ່ຽວຂ້ອງກັບແນວຄວາມຄິດຂອງຕົວເລກເບື້ອງຕົ້ນ ແລະ ຖືກອອກແບບເພື່ອລະບຸວ່ານັກຮຽນສາມາດນັບໄດ້ດີປານໃດ, ຕົວເລກໃດທີ່ເຂົາເຈົ້າສາມາດຈື່ຈຳໄດ້, ບໍ່ວ່າຈະສາມາດນັບວັດຖຸ, ບວກ ຫຼື ລົບຕົວເລກຂະໜາດນ້ອຍ ແລະ ຈື່ຈຳຮູບແບບການເຮັດຊ້ຳໄດ້ຫຼືບໍ່.

ໃນລະຫວ່າງການປະເມີນຕົວເລກ ຄູຈະຖາມລູກຂອງເຈົ້າເຊັ່ນ:

- 'ເລີ້ມນັບຈາກໜຶ່ງ ແລະ ຂ້ອຍຈະບອກເຈົ້າວ່າເວລາໃດຄວນຢຸດ'
- 'ເຈົ້າບອກຂ້ອຍໄດ້ບໍວ່ານີ້ແມ່ນເລກຫຍັງ?' (5)

ຄຳຖາມເຫຼົ່ານີ້ຈະຊ່ວຍໃຫ້ຄູກຳນົດວ່າລູກຂອງທ່ານສາມາດຈື່ຈຳຕົວເລກແລະນັບຈາກໜຶ່ງຕໍ່ໄປໄດ້ຫຼືບໍ່. ສິ່ງເຫຼົ່ານີ້ແມ່ນທັກສະຕົວເລກທີ່ສຳຄັນທີ່ເດັກນ້ອຍຈະພັດທະນາໃນໄລຍະປີທຳອິດຂອງເຂົາເຈົ້າຢູ່ໃນໂຮງຮຽນ.

**ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບການປະເມີນການເລີ້ມຕົ້ນຊັ້ນອະນຸບານທີ່ດີທີ່ສຸດ, ກະລຸນາຕິດຕໍ່ໂຮງຮຽນຂອງລູກທ່ານ.**

ຖ້າທ່ານຕ້ອງການນາຍພາສາ, ໃຫ້ຕິດຕໍ່ບໍລິການນາຍພາສາທາງໂທລະສັບທີ່ເບີ 131 450. ພວກເຂົາສາມາດຈັດຫານາຍພາສາໃນພາສາຂອງທ່ານເພື່ອຊ່ວຍໃນການສົນທະນາກັບໂຮງຮຽນ. ທ່ານຈະບໍ່ຖືກເກັບຄ່າບໍລິການນີ້.